# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 06

**II.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ................................................07 - 09

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນພະຈິກ 2025

ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 5-6 ພະຈິກ 2025, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເປີດກອງປະຊຸມຄົບຄະນະ ຄັ້ງທີ 14 ສະໄໝທີ XIII ຂຶ້ນທີ່ນະຄອນຫຼວງຮ່າໂນ້ຍ ໂດຍການເປັນປະທານຂອງ ສະຫາຍເລຂາທິການໃຫຍ່ ໂຕເລິມ. ກອງປະຊຸມ ໄດ້ປຶກສາຫາລື ແລະ ປະກອບຄຳເຫັນໃສ່ບັນດາວຽກງານກະກຽມກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ ກອມມູນິດຫວຽດນາມ ທີ່ຈະຈັດຂຶ້ນ ໃນປີ 2026. ກອງປະຊຸມໄດ້ພ້ອມກັນປະກອບຄຳເຫັນດ້ວຍຄວາມຮັບຜິດຊອບສູງ ຕໍ່ຮ່າງບົດສໍາຫຼວດການນໍາພາ-ຊີ້ນໍາ ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XIII ທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ, ຊຶ່ງ ຄະນະບໍລິຫານງານ ໄດ້ເອກະພາບຕີລາຄາວ່າ: ຄະນະບໍລິຫານງານ ສະໄໝທີ XIII ພົບກັບ ຄວາມຫຍຸ້ງຍາກ, ສິ່ງທ້າທາຍທັງພາຍໃນ ແລະ ພາຍນອກ, ແຕ່ພາຍໃຕ້ການນໍາພາ - ຊີ້ນໍາຢ່າງມີແບບແຜນ ແລະ ເດັດດ່ຽວ ຂອງຄະນະບໍລິຫານງານພັກ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ສາມາດບັນລຸ ໄດ້ຜົນສໍາເລັດອັນສໍາຄັນ ເປັນຕົ້ນແມ່ນ ການສູ້ຊົນພັດທະນາເສດຖະກິດ ປີ 2025 ໃຫ້ບັນລຸ 8% ແລະ ອື່ນໆ. ກອງ ປະຊຸມ ຍັງໄດ້ຮັບຮອງເອົາບັນດາລາຍຊື່ ຄະນະປະທານ, ຄະນະເລຂານຸການ, ຄະນະກວດກາ ກອງປະຊຸມໃຫຍ່ ຄັ້ງທີ XIV.

#### 2) ພັກກອມມູນິດຈີນ

ວັນທີ 06 ພະຈິກ 2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ຮັບຟັງການລາຍງານ ວຽກງານການສ້າງສາທ່າການຄ້າເສລີໄຫໜານ ຢູ່ນະຄອນສ່ານຢ່າ, ແຂວງໄຫໜານ ຊຶ່ງແມ່ນນະໂຍບາຍທີ່ສໍາຄັນຂອງສູນ ກາງພັກ ໂດຍສຸມໃສ່ການລົງເລິກການປະຕິຮູບ ແລະ ເປີດປະຕູສູ່ພາຍນອກຢ່າງຮອບດ້ານໃນຍຸກໃໝ່. ຫຼັງຈາກນັ້ນ, ສະ ຫາຍ ສີ ຈິ້ນຜິງ ໄດ້ກ່າວຄໍາປາໄສທີ່ມີເນື້ອໃນສໍາຄັນວ່າ: ສູນກາງພັກ ໄດ້ຕົກລົງວ່າ ເລີ່ມແຕ່ວັນທີ 18 ທັນວາ 2025 ເປັນຕົ້ນໄປ ຈະເລີ່ມນໍາໃຊ້ລະບົບດ່ານປອດພາສີ ໃນທົ່ວເກາະໄຫໜານ ຢ່າງເປັນທາງການ ເພື່ອເປີດກວ້າງການເປີດປະຕູ ສູ່ພາຍນອກໃນລະດັບສູງ ແລະ ຊຸກຍູ້ການສ້າງເສດຖະກິດໂລກແບບເປີດກວ້າງທຸກຂັ້ນ ແລະ ວ່າ ທຸກພາກສ່ວນທີ່ກ່ຽວ ຂ້ອງຕ້ອງກະກຽມຢ່າງລະອຽດຮອບຄອບ ເພື່ອຮັບປະກັນໃຫ້ລະບົບດັ່ງກ່າວດໍາເນີນໄປຢ່າງໝັ້ນຄົງ ແລະ ເປັນລະບຽບ.

ວັນທີ 17-18 ພະຈິກ 2025, ສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມວຽກງານການປົກຄອງປະເທດຕາມ ກົດໝາຍຢ່າງຮອບດ້ານ ຂຶ້ນຢູ່ນະຄອນຫຼວງປັກກິ່ງ ຊຶ່ງສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ ໃຫ້ທິດຊີ້ນໍາຕໍ່ວຽກງານດັ່ງກ່າວ ວ່າ: ນັບແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 18 ຂອງພັກກອມມູນິດຈີນ ເປັນຕົ້ນມາ, ສູນກາງພັກກອມມູນິດຈີນ ໄດ້ຖືເອົາການປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ ເຂົ້າໃນການວາງ ແຜນຍຸດທະສາດ “4 ຮອບດ້ານ” ແລະ ອອກແຮງຊຸກຍູ້ຢ່າງແຂງແຮງ, ໄດ້ສ້າງສະພາບການລວມ ແຫ່ງການປົກຄອງ ປະເທດຕາມກົດໝາຍຢ່າງຮອບດ້ານ ໂດຍພື້ນຖານ, ລະບົບການປົກຄອງຕາມກົດໝາຍສັງຄົມນິຍົມທີ່ມີສີສັນພິເສດຂອງ ຈີນ ໄດ້ຮັບການປັບປຸງໃຫ້ສົມບູນ ຂຶ້ນຢ່າງບໍ່ຢຸດຢັ້ງ; ຕ້ອງສືບຕໍ່ຊຸກຍູ້ໃຫ້ວຽກງານການປົກຄອງປະເທດຕາມກົດໝາຍ ໃນທຸກດ້ານຂອງປະເທດ ຢ່າງຮອບດ້ານ ແລະ ເຂັ້ມແຂງ ເພື່ອຮັບປະກັນແກ່ການຊຸກຍູ້ການສ້າງພາລະກິດອັນຍິ່ງໃຫຍ່ ໃນການສ້າງປະເທດໃຫ້ເຂັ້ມແຂງ ແລະ ການຟື້ນຟູຄວາມຈະເລີນຮຸ່ງເຮືອງ ຂອງປະຊາຊາດຈີນ ຢ່າງຮອບດ້ານ ດ້ວຍ ຄວາມທັນສະໄໝແບບຈີນ.

#### 3) ພັກແຮງງານເກົາຫຼີ

ໃນວັນທີ 3 ພະຈິກ 2025, ສະຫາຍ ກິມ ຊອງນາມ, ອະດີດກໍາມະການກົມການເມືອງສູນກາງພັກແຮງງານເກົາຫຼີ, ອະດີດປະທານຄະນະກໍາມະການປະຈໍາສະພາປະຊາຊົນສູງສຸດ ສປປ ເກົາຫຼີ ໄດ້ເຖິງແກ່ມໍລະນະກໍາ ດ້ວຍພະຍາດຂອງ ຜູ້ກ່ຽວ, ລວມອາຍຸ 97 ປີ. ໃນວັນທີ 04 ພະຈິກ 2025 ໄດ້ເປີດໃຫ້ພາກສ່ວນ ພັກ ລັດ ກໍຄືຍາດພີ່ນ້ອງ ເຂົ້າໄວ້ອາໄລ ຕັ້ງແຕ່ເວລາ 9:00 ໂມງເຊົ້າ ຫາ 7:00 ໂມງແລງ ຕາມເວລາທ້ອງຖິ່ນ. ໃນນັ້ນ, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສປປ ເກົາຫຼີ, ໄດ້ເຂົ້າຮ່ວມພິທີໄວ້ອາໄລ ເປັນຜູ້ທໍາອິດ ເພື່ອ ສະແດງຄວາມເສົ້າສະຫລົດໃຈ ຕໍ່ການຈາກໄປດັ່ງກ່າວ. ຄະນະກໍາມະການສູນກາງພັກແຮງງານເກົາຫຼີ, ຄະນະກໍາມະການ ກິດຈະການແຫ່ງລັດ, ຄະນະກໍາມະການປະຈໍາສະພາປະຊາຊົນສູງສຸດ ແລະ ຄະນະລັດຖະມົນຕີ ສປປ ເກົາຫຼີ ໄດ້ຈັດພິທີຊາ ປະນາກິດ ຢ່າງສົມກຽດໃຫ້ແກ່ ສະຫາຍ ກິມ ຊອງນາມ ໃນວັນທີ 5 ພະຈິກ 2025. ສະຫາຍ ກິມ ຢົງນາມ ໄດ້ດໍາລົງຕໍາ ແໜ່ງ ເປັນປະທານຄະນະກໍາມະການປະຈໍາສະພາປະຊາຊົນສູງສຸດໃນປີ 1998 (ໃນເວລານັ້ນ ເປັນປະມຸກລັດຕາມທີ່ໄດ້

ກຳນົດໄວ້ໃນລັດຖະທຳມະນູນ ສປປ ເກົາຫຼີ) ແລະ ເຂົ້າບຳນານ ໃນປີ 2019. ສະຫາຍ ກິມ ຊອງນາມ ເຄີຍພົບປະສະຫາຍ ຈູມມະລີ ໄຊຍະສອນ, ອະດີດເລຂາທິການໃຫຍ່, ອະດີດປະທານປະເທດ ແຫ່ງ ສປປ ລາວ ຢູ່ ນະຄອນຫຼວງພຽງຢາງ ໃນປີ 2011 ແລະ ຢູ່ ນະຄອນຫຼວງວຽງຈັນ ໃນປີ 2012.

**4) ພັກກອມມູນິດກູບາ**

ລະຫວ່າງ ວັນທີ 02-03 ພະຈິກ 2025, ສະຫາຍ Miguel Díaz-Canel Bermúdez ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ ໄດ້ຕາງໜ້າໃຫ້ ພັກ-ລັດຖະບານ ແລະ ປະຊາຊົນກູບາ ສະແດງຄວາມຂອບໃຈ ຕໍ່ກັບບັນດາອົງການຈັດຕັ້ງສາກົນ ແລະ ບັນດາປະເທດເຊັ່ນ: ອົງການສະຫະປະຊາຊາດ, ອີຢູ, ແມັກຊິກໂກ, ໂກລົມເບຍ, ບຣາຊິນ, ປານາມາ, ເວເນຊູເອລາ, ອາເມຣິກາ, ເຢຍລະມັນ ແລະ ປະເທດອື່ນໆ ທີ່ໄດ້ຊ່ວຍເຫຼືອດ້ານມະນຸດສະທຳ ບໍ່ວ່າຈະເປັນເງິນ, ອາຫານ, ຢາປົວພະຍາດ ແລະ ອື່ນໆ ຕໍ່ຜົນກະທົບຈາກໄພທຳມະຊາດພະຍຸເມລີສາ (huracán Melissa) ທີ່ໄດ້ພັດຜ່ານເຂົ້າ 6 ແຂວງທາງພາກໃຕ້ ຂອງກູບາ ໃນວັນທີ 29 ຕຸລາ 2025 ຜ່ານມາ, ຊຶ່ງໄດ້ສ້າງຄວາມເສຍຫາຍຕໍ່ພື້ນຖານໂຄງລ່າງ ແລະ ຊັບສິນຂອງປະຊາຊົນຢ່າງຫຼວງຫຼາຍ.

ພັກກອມມູນິດກູບາ ຈະຈັດກອງປະຊຸມຄົບຄະນະຄັ້ງທີ XI ຂອງຄະນະບໍລິຫານງານສູນກາງພັກ ໃນລະຫວ່າງວັນທີ 12-13 ທັນວາ 2025 ຢ່າງເປັນທາງການ ທີ່ຫໍປະຊຸມສຳນັກງານສູນກາງພັກ ໂດຍການເປັນປະທານຂອງສະຫາຍ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ, ຊຶ່ງຈະມີການນຳຂັ້ນສູງ, ບັນດາກະຊວງ ແລະ ອົງການຈັດມະຫາຊົນ ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້, ຈະໄດ້ຄົ້ນຄວ້າປຶກສາຫາລື ເພື່ອຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ 2025 ແລະທິດທາງແຜນການ ປີ 2026, ຈະມີການປະເມີນການຈັດຕັ້ງປະຕິບັດໂຄງການຂອງລັດຖະບານ ເພື່ອຟື້ນຟູຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ສະມາຊິກຄະນະກຳມະການສູນກາງພັກ ຍັງຈະປຶກສາຫາລື ກ່ຽວກັບຄວາມເສຍຫາຍທີ່ເກີດຈາກພະຍຸເຮີຣິເຄນ (huracán Melissa) ແລະ ຄວາມຄືບໜ້າ ຂອງຄວາມພະຍາຍາມໃນການຟື້ນຟູບັນດາແຂວງ ທີ່ຖືກຜົນກະທົບຂອງໄພພິບັດທາງທຳມະຊາດດັ່ງກ່າວ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ບັນຫາຊາຍແດນ ລະຫວ່າງ ໄທ ແລະ ກຳປູເຈຍ: ໃນລະຫວ່າງການເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ** ຄັ້ງທີ 47 ທີ່ ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ, ທ່ານ ອະນຸທິນ ຊານວີຣະກູນ, ນາຍົກລັດຖະມົນຕີແຫ່ງຣາຊະອານາຈັກໄທ ແລະ ທ່ານ ຮຸນມາເນັດ, ນາຍົກລັດຖະມົນຕີ ແຫ່ງຣາຊະອານາຈັກ ກຳປູເຈຍ, ໄດ້ພົບປະນອກຮອບ ໃນວັນທີ 26 ຕຸລາ 2025 ໂດຍໄດ້ພ້ອມກັນລົງນາມຖະແຫຼງການຮ່ວມ ກ່ຽວກັບບັນຫາເຂດຊາຍແດນລະຫວ່າງສອງປະເທດ ໂດຍມີເນື້ອໃນເຫັນດີ ຖອນອາວຸດໜັກ ອອກຈາກເຂດຂັດແຍ່ງ; ທຳລາຍລູກລະເບີດ; ປາບປາມກຸ່ມແກ໊ງຫຼອກລວງ ແລະ ຮ່ວມກັນຄຸ້ມຄອງບໍລິຫານເຂດຊາຍແດນ. ແຕ່ພາຍຫຼັງ ໄດ້ເກີດເຫດທະຫານໄທ ຢຽບລະເບີດມີ່ນ ຢູ່ເຂດຊາຍແດນ ໃນແຂວງສີສະເກດໃນວັນທີ 10 ພະຈິກ 2025 ເຮັດໃຫ້ໄດ້ຮັບບາດເຈັບ 02 ຄົນ, ທ່ານ ອະນຸທິນ ຊານວີຣະກູນ, ນາຍົກລັດຖະມົນຕີໄທ ໄດ້ອອກຄຳສັ່ງໃຫ້ພາກ ສ່ວນທີ່ກ່ຽວຂ້ອງ ພິຈາລະນາເລື່ອງການປະທ້ວງກຳປູເຈຍ ຕໍ່ຄະນະສັງເກດການຊົ່ວຄາວອາຊຽນ ແລະ ສັ່ງໂຈະການຈັດຕັ້ງປະຕິບັດ ຖະແຫຼງການຮ່ວມສັນຕິພາບກັບກຳປູເຈຍຊົ່ວຄາວ, ແລະ ເລື່ອນການປ່ອຍຕົວທະຫານກຳປູເຈຍ 18 ຄົນ ທີ່ຖືກກັກຕົວໄວ້ ຊຶ່ງຕາມແຜນຈະປ່ອຍຕົວໃນວັນທີ 12 ພະຈິກ 2025. ສ່ວນກຳປູເຈຍ ໄດ້ອອກຖະແຫຼງການປະຕິເສດ ບໍ່ຍອມຮັບວ່າ ຕົນໄດ້ວາງລະເບີດມີ່ນໃໝ່ ຢູ່ເຂດຊາຍແດນ ພ້ອມທັງກ່າວວ່າ: ໃນຖານະເປັນປະເທດລິເລີ່ມ ແລະ ປະເທດລົງນາມໃນສົນທິສັນຍາ ວ່າດ້ວຍການຫ້າມນຳໃຊ້ລະເບີດມີ່ນແບບສັງຫານຊີວິດ, ກຳປູເຈຍ ບໍ່ເຄີຍນຳໃຊ້ລະເບີດມີ່ນໃໝ່ ແລະ ຈະບໍ່ນຳໃຊ້ໃນອະນາຄົດເຊັ່ນກັນ.

**ມົງໂກລີ:** ວັນທີ 15-16 ພະຈິກ 2025, ພັກປະຊາຊົນມົງໂກລີ ໄດ້ຈັດກອງປະຊຸມໃຫຍ່ ຄັ້ງທີ XXXI ຂຶ້ນທີ່ Buyant- Ukhaa Sport Stadium, ນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ ພາຍໃຕ້ຄຳຂວັນ “ສາມັກຄີ, ແກ້ໄຂ, ພັດທະນາ” ໂດຍການເປັນປະທານຂອງ ທ່ານ J. Batjargal, ສະມາຊິກຄະນະກຳມະການບໍລິຫານພັກ, ປະທານພັກໃນສະພາຄູຣານໃຫຍ່. ກອງປະຊຸມຄັ້ງນີ້ ມີຜູ້ແທນສະມາຊິກພັກ ເຂົ້າຮ່ວມຈາກ 21 ແຂວງ 1 ນະຄອນຫຼວງ ແລະ ມີຜູ້ແທນສະມາຊິກພັກ ເຂົ້າຮ່ວມທັງໝົດ 2,086 ທ່ານ (ປັດຈຸບັນ ພັກປະຊາຊົນມົງໂກລີມີ ສະມາຊິກພັກທັງໝົດ ຈຳນວນ

314,961 ທ່ານ ຊຶ່ງຜູ້ແທນສະມາຊິກພັກ 1 ທ່ານ ແມ່ນເປັນຕົວແທນໃຫ້ແກ່ສະມາຊິກພັກ 140 ທ່ານ) ແລະ ບັນດາທູຕານຸທູດຕ່າງປະເທດປະຈຳມົງໂກລີ ເຂົ້າຮ່ວມເປັນຕົ້ນແມ່ນ: ສປ ຈີນ, ອິນເດຍ, ສສ ຫວຽດນາມ, ສປປ ລາວ ແລະ ສປປ ເກົາຫຼີ. ເນື້ອໃນສຳຄັນຂອງກອງປະຊຸມຄັ້ງນີ້ ແມ່ນການເລືອກຕັ້ງປະທານພັກປະຊາຊົນມົງໂກລີ ຄົນໃໝ່, ປັບປຸງໂຄງສ້າງກຳມະການພັກ, ລາຍງານການກວດສອບຜູ້ແທນ ທີ່ເຂົ້າຮ່ວມກອງປະຊຸມ (Mandate Commission).

ໃນວາລະການປ່ອນບັດເລືອກຕັ້ງ ປະທານພັກປະຊາຊົນມົງໂກລີ ຄົນໃໝ່ ແບບປິດລັບ, ກອງປະຊຸມ ໄດ້ສະເໜີຊື່ຜູ້ລົງສະໝັກເລືອກຕັ້ງ 02 ທ່ານຄື: 1. ທ່ານ Nyam-Osoryn Uchral, ສະມາຊິກສະພາຄູຣານໃຫຍ່, ຮອງນາຍົກລັດຖະມົນຕີຜູ້ທີ່ໜຶ່ງ, ລັດຖະມົນຕີ ກະຊວງເສດຖະກິດ ແລະ ພັດທະນາ ມົງໂກລີ ແລະ 2. ທ່ານ B. Lkhagvajav, ສະມາຊິກພັກປະຊາຊົນມົງໂກລີ, ປະທານສະພາການຄ້າ ແລະ ອຸດສາຫະກຳມົງໂກລີ ຊຶ່ງຜົນການເລືອກຕັ້ງແມ່ນ ທ່ານ Nyam-Osoryn Uchral ໄດ້ຮັບຄະແນນສຽງ 1,974 ຄະແນນ (94,95%) ຈາກຜູ້ແທນເຂົ້າຮ່ວມລົງຄະແນນທັງໝົດ 2,086 ທ່ານ, ສ່ວນທ່ານ B. Lkhagvajav ໄດ້ຮັບ 105 ຄະແນນ (5,05%), ມີບັດຕາຍ 07 ບັດ. ພາຍຫຼັງການປະກາດຜົນການເລືອກຕັ້ງຢ່າງເປັນທາງການແລ້ວ ທ່ານ Nyam-Osoryn Uchral ກໍໄດ້ຂຶ້ນຮັບຕຳແໜ່ງ ເປັນປະທານພັກປະຊາຊົນມົງໂກລີ ຄົນໃໝ່.

**ການພົວພັນລະຫວ່າງ ຍີ່ປຸ່ນ ແລະ ຈີນ:** ພາຍຫຼັງ ທ່ານ ນາງ ຊານາອິ ທາກາອິຊິ (Sanae Takaichi), ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ສະແດງຄວາມຄິດເຫັນ ກ່ຽວກັບໄຕ້ຫວັນ ໂດຍລະບຸວ່າ ຖ້າ ສປ ຈີນ ໂຈມຕີໄຕ້ຫວັນ ຖືວ່າ ເປັນໄພຄຸກຄາມຕໍ່ຍີ່ປຸ່ນນຳ ແລະ ຍີ່ປຸ່ນ ກໍມີສິດຈະໃຊ້ກຳລັງ ປົກປ້ອງຕົນເອງ ແລະ ຊ່ວຍໄຕ້ຫວັນ ເຊັ່ນກັນ, ຊຶ່ງສ້າງຄວາມບໍ່ພໍໃຈ ແກ່ລັດຖະບານຈີນ ແລະ ໄດ້ອອກຫຼາຍມາດຕະການ ຕອບໂຕ້ຄຳເວົ້າດັ່ງກ່າວ. ໃນເບື້ອງຕົ້ນ ກະຊວງການຕ່າງປະ ເທດຈີນ ໄດ້ຮຽກທູດຍີ່ປຸ່ນ ປະຈຳ ສປ ຈີນ ເຂົ້າພົບເພື່ອປະທ້ວງ ແລະ ຮຽກຮ້ອງໃຫ້ນາຍົກລັດຖະມົນຕີ ຖອນຄວາມເວົ້າດັ່ງກ່າວ, ແຕ່ທາງການຍີ່ປຸ່ນ ຍັງສະແດງຈຸດຢືນເກົ່າ ບໍ່ປ່ຽນແປງ. ຕໍ່ມາ, ທາງການຈີນ ໄດ້ແຈ້ງເຕືອນປະຊາຊົນຈີນ ໃຫ້ພິຈາລະນາກ່ອນຈະໄປທ່ອງທ່ຽວ ຫຼື ຈະໄປສຶກສາຢູ່ຍີ່ປຸ່ນ ຕະຫຼອດຮອດແຈ້ງເຕືອນປະຊາຊົນຈີນ ທີ່ອາໄສຢູ່ຍີ່ປຸ່ນ ໃຫ້ລະມັດລະວັງເພື່ອຄວາມປອດໄພ ເນື່ອງຈາກວ່າ ຄວາມຂັດແຍ່ງທີ່ເກີດຂຶ້ນ ອາດເຮັດໃຫ້ເກີດກະແສຕໍ່ຕ້ານຄົນຈີນ ໃນຍີ່ປຸ່ນ. ນອກຈາກນັ້ນ, ສປ ຈີນ ກໍໄດ້ສົ່ງເຮືອອອກລາດຕະເວນ ເຂດນ່ານນ້ຳ ໃນໝູ່ເກາະດ້ຽວຢູ (Diaoyu Islands) ທີ່ຍັງເປັນເຂດຂັດແຍ່ງ ລະຫວ່າງ ຍີ່ປຸ່ນ ກັບ ສປ ຈີນ. ມາດຕະການຕ່າງໆເຫຼົ່ານັ້ນ ອາດຈະມີຜົນກະທົບ ຕໍ່ພາກການທ່ອງທ່ຽວຂອງຍີ່ປຸ່ນ ເນື່ອງຈາກວ່າ ຍີ່ປຸ່ນ ເພິ່ງພາການທ່ອງທ່ຽວຫຼາຍພໍສົມຄວນ ໃນການຂັບເຄື່ອນເສດຖະກິດຂອງປະເທດ. ຂະນະທີ່, ຄົນຈີນ ເປັນກຸ່ມນັກທ່ຽວທ່ຽວ ອັນດັບໜຶ່ງ, ໃນໄລຍະ 06 ເດືອນ ຕົ້ນປີ 2025 ຂອງຍີ່ປຸ່ນ, ມີນັກທ່ອງທ່ຽວຈີນ 797,990 ຄົນ. ສາຍການບິນ 06 ແຫ່ງ ຂອງ ສປ ຈີນ ກໍໄດ້ແຈ້ງວ່າ ຖ້າຜູ້ໃດມີຈຸດປະສົງຢາກຍົກເລີກຖ້ຽວບິນໄປຍີ່ປຸ່ນ ແມ່ນສາມາດຍົກເລີກ ຖອນເງິນຄືນ ຫຼື ເລື່ອນເວລາອອກໄປໄດ້ ໂດຍບໍ່ຖືກປັບໄໝແຕ່ຢ່າງໃດ. ສັງເກດເຫັນວ່າ ນາຍົກລັດຖະມົນຕີຍີ່ປຸ່ນ ຄົນປັດຈຸບັນ ທີ່ເຂົ້າຮັບຕຳແໜ່ງ ໃນເດືອນຕຸລາ 2025 ຜ່ານມານີ້, ມີທັດສະນະຕ້ານຈີນ ຫຼາຍກວ່ານາຍົກລັດຖະມົນຕີ ຄົນກ່ອນ ເຖິງແມ່ນວ່າ ທັງສອງທ່ານ ຈະຢູ່ໃນພັກອະນຸລັກນິຍົມ ດຽວກັນກໍຕາມ.

**ການເມືອງບັງກລາເທດ:** ໃນວັນທີ 17 ພະຈິກ 2025, ສານອາຍາສາກົນ ICT (International Crimes Tribunal) ຂອງປະເທດບັງກລາເທດ ໄດ້ຕັດສິນປະຫານຊີວິດ ທ່ານນາງ Sheikh Hasina, ອາດີດນາຍົກລັດຖະມົນຕີ ແລະ ທ່ານ Asaduzzaman Khan, ອາດີດລັດຖະມົນຕີກະຊວງພາຍໃນ, ຂໍ້ຫາ “ອາຊະຍາກຳຕໍ່ມະນຸດຊາດ (Crimes Against Humanity)” ໃນການອອກຄຳສັ່ງປາບປາມທີ່ຮຸນແຮງເກີນຂອບເຂດ ຕໍ່ການປະທ້ວງທີ່ນຳພາໂດຍນັກສຶກສາໃນລະຫວ່າງ ເດືອນມິຖຸນາ-ສິງຫາ 2024 ເຮັດໃຫ້ມີນັກສຶກສາ, ນັກຂ່າວ ແລະ ຜູ້ເຂົ້າຮ່ວມຊຸມນຸມ ເສຍຊີວິດຈຳນວນຫຼາຍ, ເຮັດໃຫ້ ທ່ານ ນາງ Sheikh Hasina ໄປຂໍລີ້ໄພຢູ່ ປະເທດ ອິນເດຍ ຈົນເຖິງປັດຈຸບັນ, ເຮັດໃຫ້ມີການຈັດຕັ້ງລັດຖະບານຊົ່ວຄາວ ນຳໂດຍທ່ານ Muhammad Yunus ໃນວັນທີ 08 ສິງຫາ 2024. ທັດສະນະຕໍ່ຄຳຕັດສິນໂທດດັ່ງກ່າວ ສາມາດແບ່ງອອກເປັນສອງຝ່າຍ ທີ່ຂັດແຍ້ງກັນຢ່າງຈະແຈ້ງ. ໃນດ້ານໜຶ່ງ, ລັດຖະບານຊົ່ວຄາວ ນຳໂດຍທ່ານ Muhammad Yunus, ໄດ້ປະກາດວ່າ ຄຳຕັດສິນດັ່ງກ່າວ ເປັນການຢືນຢັນຫຼັກການທີ່ວ່າ ບໍ່ມີໃຜ ບໍ່ວ່າຈະມີອຳນາດສູງສໍ່າໃດ ກໍ່ບໍ່ສາມາດຢູ່ເໜືອກົດໝາຍ, ສິ່ງນີ້ມີຄວາມສຳຄັນຕໍ່ການສ້າງພື້ນຖານປະຊາທິປະໄຕ ຄືນໃໝ່. ໃນດ້ານກົງກັນຂ້າມ, ທ່ານ ນາງ Hasina ແລະ ພັກ Awami League ໄດ້ປະຕິເສດຄຳຕັດສິນດັ່ງກ່າວ ແລະ ກ່າວວ່າ

ສານ ICT ເປັນ "ສານປອມ" (kangaroo court) ແລະ ການດຳເນີນຄະດີ ວ່າ ບໍ່ມີຄວາມຍຸດຕິທຳ ແລະ ມີແຮງຈູງໃຈທາງດ້ານການເມືອງ, ຍ້ອນວ່າ ລັດຖະບານຊຸດປັດຈຸບັນ ບໍ່ໄດ້ມາຈາກການເລືອກຕັ້ງ. ການຕັດສິນດັ່ງກ່າວ ຈະມີຜົນກະທົບໂດຍກົງ ຕໍ່ການເລືອກຕັ້ງສະມາຊິກສະພາ ທີ່ຈະຈັດຕັ້ງໃນເດືອນກຸມພາ 2026 ນີ້, ຊຶ່ງອາດເຮັດໃຫ້ ພັກ Awami League ຖືກຕັດສິດບໍ່ໃຫ້ລົງຮັບສະໝັກເລືອກຕັ້ງ. ພ້ອມດຽວກັນນັ້ນ, ຄະດີດັ່ງກ່າວ ໄດ້ສ້າງຄວາມທ້າທາຍຕໍ່ສາຍພົວພັນທາງດ້ານການທູດ ລະຫວ່າງ ອິນເດຍ-ບັງກລາເທດ ແລະ ການສົ່ງຜູ້ຮ້າຍຂ້າມແດນ ເນື່ອງຈາກປັດຈຸບັນ ທ່ານ ນາງ Hasina ຍັງລີ້ໄພ ຢູ່ ອິນເດຍ.

### 3. ພາກພື້ນເອີຣົບ-ອາເມຣິກາ

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ອູແກຣນ ແລະ ຣັດເຊຍ ສືບຕໍ່ໂຈມຕີກັນໄປມາ ໂດຍ ຣັດເຊຍ ເນັ້ນໃສ່ການໂຈມຕີບັນດາໂຄງລ່າງພື້ນຖານ ທາງພາກຕາເວັນອອກ ແລະ ບາງເຂດໃກ້ຄຽງ ນະຄອນຫຼວງກີແອບ ຂອງອູແກຣນ ເຮັດໃຫ້ໄຟຟ້າດັບ ເປັນວົງກວ້າງ, ຂະນະທີ່ ອູແກຣນ ກໍໄດ້ໂຈມຕີ ເຂດ Volgogard ທາງພາກໃຕ້ ຂອງຣັດເຊຍ ເຮັດໃຫ້ໄຟຟ້າດັບ ເຊັ່ນກັນ.

ທ່າມກາງ ຄວາມຂັດແຍ່ງສອງຝ່າຍ ທີ່ຍັງບໍ່ມີທ່າອ່ຽງ ຈະຢຸດຕິລົງ, ໃນວັນທີ 01 ພະຈິກ 2025, ກະຊວງປ້ອງກັນປະເທດຣັດເຊຍ ໄດ້ຈັດພິທີເປີດຕົວ ເຮືອດຳນ້ຳພະລັງງານນິວເຄລຍລຳໃໝ່ ທີ່ມີຊື່ ວ່າ “Khabarovsk”, ຊຶ່ງຖືກອອກແບບ ເພື່ອບັນທຸກໂດຣນນິວເຄລຍໃຕ້ນ້ຳໂດຍສະເພາະ. ກອງທັບຣັດເຊຍ ຍັງໄດ້ລາຍງານວ່າ ປັດຈຸບັນ ທະຫານອູແກຣນ ປະມານ 5.500 ຄົນ ຖືກປິດລ້ອມໃນເມືອງ Kranoarmeysk ແລະ 5.000 ຄົນ ຖືກປິດລ້ອມ ຢູ່ເມືອງ Dimitrov ແລະ ເມືອງ Kupyansk ທາງພາກຕາເວັນອອກ ຂອງອູແກຣນ. ໂດຍລວມແລ້ວ, ກອງທັບຣັດເຊຍ ຍັງຢູ່ໃນທ່າໄດ້ປຽບ ໃນຄວາມຂັດແຍ່ງ ກັບອູແກຣນ.

ນອກນັ້ນ, ອູແກຣນ ຮຽກຮ້ອງໃຫ້ບັນດາພັນທະມິດຕາເວັນຕົກ ເລັ່ງການສົ່ງມອບລະບົບປ້ອງກັນໄພທາງອາກາດເພີ່ມເຕີມ (ເຊັ່ນ: ລະບົບ Patriot, IRIS-T, NASAMS) ເພື່ອປົກປ້ອງເມືອງຕ່າງໆ ລວມເຖິງ ອຸປະກອນສຸກເສີນດ້ານພະລັງງານ ເຊັ່ນ: ເຄື່ອງປັ່ນໄຟ, ໝໍ້ແປງໄຟ ແລະ ອຸປະກອນສ້ອມແປງຕ່າງໆ ເພື່ອຊ່ວຍອູແກຣນ ຟື້ນຟູລະບົບໂດຍໄວ ເນື່ອງຈາກປັດຈຸບັນ ຣັດເຊຍ ໄດ້ສືບຕໍ່ໂຈມຕີທາງພາກພື້ນດິນ ຢ່າງໜັກໜ່ວງໃນຫຼາຍຈຸດ ແລະ ຣັດເຊຍຍັງຢູ່ໃນທ່າໄດ້ປຽບ.

ຄຽງຄູ່ກັບຄວາມຂັດແຍ່ງ ໃນວັນທີ 17 ພະຈິກ 2025, ປະເທດແຟັງລັງ ໜຶ່ງໃນປະເທດສະມາຊິກຂອງກຸ່ມນາໂຕ້ (NATO) ໄດ້ເລີ່ມຊ້ອມຮົບຂະໜາດໃຫຍ່ ຫ່າງຈາກຊາຍແດນຣັດເຊຍ 100 ກິໂລແມັດ ປະກອບດ້ວຍກຳລັງພົນ 2.200 ຄົນ ແລະ ຍຸດໂທປະກອນ 500 ກວ່າຄັນ. ຂະນະທີ່, ປະເທດໂປໂລຍ ກໍດຳເນີນຊ້ອມຮົບ ທາງພາກເໜືອຂອງປະເທດ ຫ່າງຈາກຊາຍແດນຣັດເຊຍ ປະມານ 200 ກິໂລແມັດ. ພ້ອມດຽວກັນນີ້, ລັດຖະມົນຕີກະຊວງປ້ອງກັນປະເທດເຢຍລະມັນ ໄດ້ກ່າວຫາວ່າ ຣັດເຊຍ ອາດຈະໂຈມຕີບັນດາປະເທດນາໂຕ້ ໃນປີ 2026, ຮຽກຮ້ອງໃຫ້ບັນດາປະເທດນາໂຕ້ ເພີ່ມງົບປະມານທາງທະຫານ ເພື່ອກຽມພ້ອມຮັບມື, ແຕ່ນັກວິເຄາະຫຼາຍທ່ານ ມີຄຳເຫັນວ່າ ການກ່າວຫາດັ່ງກ່າວ ເປັນພຽງຂໍ້ອ້າງ ເພື່ອບີບໃຫ້ບັນດາປະເທດສະມາຊິກນາໂຕ້ ເພີ່ມງົບປະມານທາງທະຫານ ໃຫ້ໄດ້ 5% ຂອງ GDP ຂອງປະເທດນັ້ນໆ ເພື່ອໃຫ້ໄດ້ຕາມຄາດໝາຍ ຂອງປະເທດສະມາຊິກນາໂຕ້ ແລະ ເປັນໄປບໍ່ໄດ້ ທີ່ ຣັດເຊຍ ຈະປະເຊີນໜ້າກັບບັນດາປະເທດນາໂຕ້ ຖ້າຫາກວ່າ ປະເທດເຫຼົ່ານັ້ນ ບໍ່ຮຸກຮານຣັດເຊຍ ກ່ອນ. ນອກຈາກນັ້ນ, ສ.ອາເມຣິກາ ຍັງຫາທຸກຊ່ອງທາງເພື່ອກົດດັນຣັດເຊຍ ໃຫ້ຢຸດຕິຄວາມຂັດແຍ່ງກັບອູແກຣນ ຊຶ່ງປັດຈຸບັນທາງການ ສ.ອາເມຣິກາ ກຳລັງຮ່າງກົດໝາຍ ເພື່ອຂວ້ຳບາດ ປະເທດທີ່ເຮັດການຄ້າກັບຣັດເຊຍ. ແນວໃດກໍຕາມ, ນັບຕັ້ງແຕ່ເກີດຄວາມຂັດແຍ່ງໃນ ອູແກຣນ, ສ.ອາເມຣິກາ ແລະ ພັນທະມິດໄດ້ໃຊ້ມາດຕະຂວ້ຳບາດຂົ່ມຂູ່ ເພື່ອທຳລາຍເສດຖະກິດຂອງຣັດເຊຍ ມາໂດຍຕະຫຼອດ ແຕ່ກໍ່ບໍ່ເກີດຜົນໃດໆ ຍິ່ງເຮັດໃຫ້ ຣັດເຊຍ ມີຊ່ອງທາງ ເຮັດການຄ້າກັບປະເທດອື່ນແທນ, ການເພິ່ງພາສະຫະພາບເອີຣົບ ແລະ ເປັນບັນດາປະເທດເອີຣົບເອງ ທີ່ຕ້ອງໄດ້ຮັບຜົນກະທົບທາງເສດຖະກິດ ຍ້ອນຕ້ອງໄດ້ຊື້ພະລັງງານ ໃນລາຄາສູງກວ່າ ທີ່ຊື້ກັບຣັດເຊຍ. ສ.ອາເມຣິກາ ຍັງກົດດັນໃຫ້ ອູແກຣນ ຕ້ອງຍອມຮັບຂອບການເຈລະຈາສັນຕິພາບ ສະບັບໃໝ່ ທີ່ຮ່າງໂດຍ ສ.ອາມເຣິກາ ເພື່ອຢຸດຕິສົງຄາມ ໃນເງື່ອນໄຂທີ່ ອູແກຣນ ຈະຕ້ອງຍອມຍົກດິນແດນບາງສ່ວນໃຫ້ຣັດເຊຍ ແລະ ຍອມວາງອາວຸດບາງຊະນິດ ໂດຍສະເພາະ ອາວຸໂຈມຕີໄລຍະໄກ ລວມເຖິງການຫຼຸດຂະໜາດກອງທັບ.

**ການເມືອງ ອາເມຣິກາ:** ພາຍຫຼັງ ສ. ອາເມຣິກາ ໄດ້ເລີ່ມໂຈະການເຮັດວຽກລັດຖະບານກາງ ສ. ອາເມຣິກາ (US federal government shutdown) ຕັ້ງແຕ່ວັນທີ 01 ຕຸລາ 2025 ເປັນຕົ້ນມາ ຫຼັງຈາກສະພາສູງອາເມຣິກາ ບໍ່ສາມາດຜ່ານກົດໝາຍ ວ່າດ້ວຍການຈັດສັນງົບປະມານທີ່ຈຳເປັນສຳລັບງົບປະມານປີ 2026 (Fiscal Year 2026) ໂດຍສະເພາະ ແມ່ນງົບປະມານອຸດໜູນປະກັນໄພສຸຂະພາບ (Premium Tax Credits - PTCs) ພາຍໃຕ້ກົດໝາຍວ່າດ້ວຍການດູແລຮັກສາທີ່ເຂົ້າເຖິງໄດ້ (Affordable Care Act - ACA) ຊຶ່ງຈະໝົດອາຍຸໃນທ້າຍປີ 2025 ທີ່ເປັນການຊຸກຍູ້ຫຼັກ ຈາກລັດຖະບານຊຸດກ່ອນ (ພາຍໃຕ້ການນຳພາຂອງ ພັກ Democrat), ສະແດງເຖິງຄວາມລົ້ມເຫຼວໃນຂະບວນການອະນຸມັດງົບປະມານ ແລະ ນິຕິກຳຫຼັກ ຂອງປະເທດ ໄດ້ເຮັດໃຫ້ອາເມຣິກາ ກ້າວເຂົ້າສູ່ໄລຍະ ທີ່ອ່ອນໄຫວທີ່ສຸດ (ເປັນການ Shutdown ທີ່ແກ່ຍາວເປັນເວລາດົນທີ່ສຸດ ໃນປະຫວັດສາດຂອງ ອາເມຣິກາ ຊຶ່ງ ໃນໄລຍະປີ 2018-2019 ພາຍໃຕ້ການບໍລິຫານຂອງປະທານາທິບໍດີ ທຣຳ ຊຸດທຳອິດ ກໍມີເຫດການລັກສະນະດຽວກັນ ແຕ່ແກ່ຍາວພຽງ 35 ວັນ), ປັດຈຸບັນ ປະຊາຊົນ ເລີ່ມໄດ້ຮັບຜົນກະທົບ ຈາກການ Shutdown ດັ່ງກ່າວ ໂດຍສະເພາະ ແມ່ນຕໍ່ກັບໂຄງການປະກັນສັງຄົມ ທີ່ມີປະຊາຊົນ ອາເມຣິກາ ໄດ້ປະໂຫຍດດ້ານສຸຂະພາບ ເຖິງ 42 ລ້ານຄົນ; ລັດຖະບານໄດ້ສັ່ງໃຫ້ຫຼຸດຖ້ຽວບິນລົງ 10% ທີ່ສະໜາມບິນສຳຄັນ 40 ແຫ່ງ ທົ່ວປະເທດ ເພື່ອບັນເທົາ ການຂາດແຄນພະນັກງານຄວບຄຸມການຈໍລະຈອນທາງອາກາດທີ່ເຮັດວຽກໂດຍບໍ່ໄດ້ຮັບຄ່າຈ້າງ.

ວັນທີ 04 ພະຈິກ 2025, ສ.ອາເມຣິກາ ໄດ້ມີການເລືອກຕັ້ງທ້ອງຖິ່ນ ຂອງນະຄອນນິວຢອກ, ຜົນຂອງການເລືອກຕັ້ງ ແມ່ນ ທ່ານ ໂຊຣານ ມາມດານີ (Zohran Mamdani) ຈາກພັກດີໂມແຄຼດ ໄດ້ຮັບໄຊຊະນະ ດ້ວຍຄະແນນ 54.4% ແລະ ທ່ານ  ເຄີຕິສ ສະລີວາ (Curtis Sliwa) ຕົວແທນຈາກພັກຣີພັບບລີກັນ ໄດ້ຄະແນນ 41.6%. ທ່ານໂຊຣານ ມາມດານີ ເປັນຊາວອົບພະຍົບອູການດາ ແລະ ໄດ້ຮັບສັນຊາດອາເມຣິກາ ໃນປີ 2018, ມີແນວຄິດສັງຄົມນິຍົມປະຊາທິປະໄຕແບບອາເມຣິກາ, ນະໂຍບາຍຫຼັກ ແມ່ນເນັ້ນໃສ່ຄວາມເທົ່າທຽບທາງສັງຄົມ ແລະ ການປະຕິຮູບເສດຖະກິດ ເປັນຕົ້ນ ການຫຼຸດຄ່າຄອງຊີບຂອງປະຊາຊົນ, ການປະຕິຮູບລະບົບການສຶກສາ, ສາທາລະສະສຸກ ແລະ ອື່ນໆ. ຂະນະດຽວກັນ, ຜົນການເລືອກຕັ້ງທ້ອງຖິ່ນ ຂອງເມືອງເຊນປໍພອລ, ເມືອງຫຼວງຂອງລັດມິນເນໂຊຕາ, ຜົນການເລືອກຕັ້ງແມ່ນ ທ່ານ ນາງ ຄາວລີ ວາງ ເຮີ (Kaohly Vang Her) ຈາກພັກດີໂມແຄຼດ ໄດ້ຮັບໄຊຊະນະ ດ້ວຍຄະແນນສຽງ 48%. ໄຊຊະນະ ຂອງທ່ານ ນາງ ຄາວລີ ວາງ ເຮີ ໄດ້ສ້າງປະຫວັດສາດເປັນແມ່ຍິງຄົນທຳອິດ ທີ່ມີເຊື້ອສາຍມົ້ງລາວ. ສ່ວນນະໂນບາຍ ຂອງທ່ານ ພາຍຫຼັງເຂົ້າຮັບຕຳແໜ່ງ ໃນເດືອນມັງກອນ 2026 ແມ່ນເນັ້ນໃສ່ແກ້ໄຂບັນຫາພາສີ ແລະ ເສດຖະກິດ, ຄວາມປອດໄພສາທາລະນະ, ທີ່ຢູ່ອາໄສ ແລະ ສິດທິຂອງຜູ້ເຊົ່າ. ນອກຈາກນີ້, ທ່ານໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະລຸກຂຶ້ນຕໍ່ສູ້ກັບນະໂຍບາຍຂອງລັດຖະບານກາງ (ລັດຖະບານ ທຣຳ) ທີ່ອາດຈະເປັນໄພຄຸກຄາມ ຕໍ່ຊຸມຊົນຄົນເຂົ້າເມືອງ, ຜູ້ລີ້ໄພ, ແລະ ຊຸມຊົນ ຄວາມຫຼາກຫຼາຍທາງເພດ (LGBTQ+).

ນອກຈາກນັ້ນ, ຍັງມີການເລືອກຕັ້ງເຈົ້າຄອງໃນຫຼາຍລັດ ເຊັ່ນ: ລັດຄາລີຟໍເນຍ, ລັດນິວເຈີຊີ, ເວີຈິເນຍ ແລະ ລັດຈໍເຈຍ. ຜູ້ລົງສະໝັກເລືອກຕັ້ງດັ່ງກ່າວ ແມ່ນມາຈາກຕົວແທນ ລະຫວ່າງ 02 ພັກການເມືອງຫຼັກ (ພັກດີໂມແຄຼດ ແລະ ພັກຣີພັບຣີກັນ), ຜົນການເລືອກຕັ້ງດັ່ງກ່າວ ແມ່ນພັກດີໂມແຄຼດ ໄດ້ຮັບໄຊຊະນະ ເປັນສ່ວນໃຫຍ່.

**ຄວາມຂັດແຍ່ງ ລະຫວ່າງ ສ.ອາເມຣິກາ ແລະ ເວເນຊູເອລາ:** ການພົວພັນລະຫວ່າງ ສອງປະເທດດັ່ງກ່າວ ເລີ່ມເຄັ່ງຕຶງຂຶ້ນອີກຄັ້ງ ຕັ້ງແຕ່ເດືອນກັນຍາ 2025, ໂດຍປະທານາທິບໍດີ ສ.ອາເມຣິກາ ໄດ້ປະກາດປາບປາມບັນດາອາຊະກອນຂ້າມຊາດ ຫຼື ພວກທີ່ກ່ຽວຂ້ອງກັບການຄ້າຂາຍຢາເສບຕິດ ທີ່ອ້າງວ່າ ມີຜູ້ນຳ ເວເນຊູເອລາ ເປັນຜູ້ຢູ່ເບື້ອງຫຼັງ, ໂດຍອາທິດຜ່ານມາ ສ.ອາເມຣິກາ ໄດ້ສົ່ງເຮືອບັນທຸກເຮືອບິນ ທີ່ໃຫຍ່ທີ່ສຸດ (USS Gerald Ford) ພ້ອມດ້ວຍກອງເຮືອສະໜັບສະໜູນ ເຂົ້າໄປໃກ້ຊາຍແດນ ເວເນຊູເອລາ ຮ່ວມກັບກອງເຮືອ ສ.ອາເມຣິກາ ທີ່ປະຈຳການ ຢູ່ເຂດທະເລ ກາຣິບຽນ ກ່ອນໜ້ານີ້ ໂດຍອ້າງວ່າ ເພື່ອປ້ອງກັນໄພຄຸກຄາມ ຈາກຢາເສບຕິດທີ່ລັກລອບເຂົ້າມາ ສ.ອາເມຣິກາ. ນັບແຕ່ເດືອນກັນຍາ 2025 ເປັນຕົ້ນມາ, ສ.ອາເມຣິກາ ໄດ້ໂຈມຕີເຮືອໃນເຂດທະເລ ກາຣິບຽນ 20 ກວ່າລຳ ໂດຍອ້າງວ່າເປັນເຮືອຂົນສົ່ງຢາເສບຕິດ ເຮັດໃຫ້ມີຜູ້ເສຍຊີວິດ ຢ່າງໜ້ອຍ 80 ຄົນ. ສ່ວນ ເວເນຊູເອລາ ກໍໄດ້ຍົກລະດັບທາງທະຫານ ໂດຍສັ່ງໃຫ້ກຳລັງພົນສອງແສນຄົນ ຊ້ອມຮົບ ແລະ ກະກຽມຍຸດໂທປະກອນ ເພື່ອກຽມຮັບມືກັບໄພຄຸກຄາມທີ່ອາດຈະເກີດຂຶ້ນ ຈາກ ສ.ອາເມຣິກາ. ເວເນຊູເອລາ ຖືກ ສ.ອາເມຣິກາ ຂວໍ້າບາດທາງເສດຖະກິດ ເປັນເວລາດົນນານແລ້ວ, ການກະທຳລັກສະນະດັ່ງກ່າວ ຂອງສ.ອາເມຣິກາ ໃນປັດຈຸບັນນີ້ ບໍ່ແມ່ນອັນໃໝ່ ພຽງແຕ່ອາດຈະປ່ຽນຮູບແບບ ເພື່ອໃສ່ຮ້າຍປ້າຍສີ ແລະ ຫວັງມ້າງເພທຳລາຍລະບອບການເມືອງ ຂອງເວເນຊູເອລາ ຄືກັບຄວາມພະຍາຍາມໃນໄລຍະຜ່ານມາ.

**4. ພາກພື້ນຕາເວັນອອກກາງ**

***ຄວາມຂັດແຍ່ງເຂດກາຊາ***: ໃນວັນທີ 5 ພະຈິກ 2025, ກຸ່ມຮາມາສ ໄດ້ສົ່ງຮ່າງຕົວປະກັນທີ່ເສຍຊີວິດ ອີກ 06 ຄົນ ໄປໃຫ້ ອິດສະຣາແອນ, ຂະນະທີ່ ອິດສະຣາແອນ ກໍໄດ້ສົ່ງຮ່າງຕົວປະກັນ ປາແລັດສະຕິນ 15 ຄົນ ຄືນໃຫ້ປາແລັດສະຕິນ ຕາມການຕົກລົງ ໃນຂໍ້ຕົກລົງຢຸດຍິງ ທີ່ມີຜົນບັງຄັບໃຊ້ ແຕ່ວັນທີ 10 ຕຸລາ 2025 ເປັນຕົ້ນມາ (ປັດຈຸບັນໄດ້ຮັບສົບຊາວປາແລັດສະຕິນແລ້ວ 330 ສົບ). ເຖິງແນວໃດກໍຕາມ, ອິດສະຣາແອນ ບໍ່ໄດ້ລົດລະການໂຈມຕີ ປະຊາຊົນປາແລັດສະຕິນ ໃນເຂດກາຊາ ແລະ ເຂດເວສແບັງ ເຮັດໃຫ້ປະຊາຊົນປາແລັດສະຕິນເສຍຊີວິດເພີ່ມຂຶ້ນ ໃນແຕ່ລະມື້ຢ່າງນັບບໍ່ຖ້ວນ ທ່າມກາງການປະເຊີນກັບຄວາມອຶດຫິວ, ຂາດແຄນອາຍກາສທຳມະຊາດ ແລະ ອື່ນໆ ຂອງປະຊາຊົນປາແລັດສະຕິນ ຍ້ອນ ອິດສະຣາແອນ ບໍ່ອະນຸຍາດໃຫ້ລົດບັນທຸກການຊ່ວຍເຫຼືອດ້ານມະນຸດຊະທຳ ເຂົ້າເຖິງເຂດກາຊາໄດ້ຕາມຈຳນວນທີ່ຕົກລົງກັນ.

ສ່ວນວິກິດການດ້ານມະນຸດສະທຳ, ອົງການສະຫະປະຊາຊາດ ແລະ ໜ່ວຍງານບັນເທົາທຸກ ລາຍງານວ່າ ປະຊາຊົນຫຼາຍແສນຄອບຄົວກຳລັງປະເຊີນກັບລະດູໜາວ ໂດຍບໍ່ມີທີ່ພັກອາໄສທີ່ເໝາະສົມ, ການຂາດແຄນອາຫານ ແລະ ເຄື່ອງນຸ່ງຫົ່ມກັນໜາວ, ໃນວັນທີ 13-14 ພະຈິກ 2025 ໄດ້ມີຝົນຕົກໜັກຄັ້ງທຳອິດຂອງລະດູໜາວ, ສ້າງຄວາມທຸກຍາກລຳບາກ ໃຫ້ແກ່ປະຊາຊົນຜູ້ທີ່ຖືກຍົກຍ້າຍຖິ່ນຖານ ທີ່ອາໄສຢູ່ໃນເຕັ້ນຜ້າໃບທີ່ບໍ່ແຂງແຮງ ແລະ ມີຄວາມສ່ຽງສູງທີ່ຈະເກີດນ້ຳຖ້ວມໃນເຂດທີ່ພັກຊົ່ວຄາວ.

ໃນວັນທີ 17 ພະຈິກ 2025, ສະພາຄວາມໝັ້ນຄົງສະຫະປະຊາຊາດ ລວມທັງສະມາຊິກຖາວອນ ແລະ ບໍ່ຖາວອນ ໄດ້ລົງຄະແນນສຽງ ທັງໝົດ 15 ສຽງ (ຣັດເຊຍ ແລະ ສປ ຈີນ ງົດອອກສຽງ) ຮັບຮອງເອົາມະຕິ ທີ່ສະໜັບສະໜູນໂດຍ ສ.ອາເມຣິກາ ວ່າດ້ວຍ ການອະນຸມັດໃຫ້ສ້າງຕັ້ງ "ກອງກຳລັງສ້າງຄວາມໝັ້ນຄົງສາກົນ" (International Stabilization Force - ISF) ແລະ "ຄະນະກຳມະການເພື່ອສັນຕິພາບ" (Board of Peace) ເພື່ອເຂົ້າມາຄຸ້ມຄອງ ແລະ ຟື້ນຟູເຂດກາຊາ ໃນໄລຍະຂ້າມຜ່ານ ໂດຍອີງໃສ່ແຜນການສັນຕິພາບ 20 ຂໍ້ ຂອງທ່ານ ໂດນັນທຣຳ.

## II. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ເອກອັກຄະລັດຖະທູດ ແຫ່ງ ສະຫະພາບເອີຣົບ ປະຈໍາ ສປປ ລາວ



ໃນວັນທີ 05 ພະຈິກ 2025, ທີ່ສໍານັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ມາກ ກາລາເກີ (Mark GALLAGHER), ເອກອັກຄະລັດຖະທູດ ແຫ່ງ ສະຫະພາບເອີຣົບ (ອີຢູ) ປະຈໍາ ສປປ ລາວ.

ໂອກາດນີ້, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ການປະຕິບັດໜ້າທີ່ຢ່າງຫ້າວຫັນຂອງທ່ານທູດ, ພ້ອມທັງຕີລາຄາສູງ ຕໍ່ສາຍພົວພັນອັນດີ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ຕະຫຼອດໄລຍະ 50 ປີຜ່ານມາ. ພ້ອມກັນນັ້ນ, ຫົວໜ້າ ຄຕພ ຍັງໄດ້ສະແດງຄວາມຂອບໃຈຕໍ່ສະຫະພາບເອີຣົບ ທີ່ໃຫ້ການຊ່ວຍເຫຼືອແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ເຊື່ອໝັ້ນວ່າການມາປະຕິບັດໜ້າທີ່ການທູດຂອງທ່ານ ຢູ່ ສປປ ລາວ ຈະປະກອບສ່ວນຊຸກຍູ້ໃຫ້ມີການຮ່ວມມືກັນຢ່າງໃກ້ຊິດລະຫວ່າງ ອີຢູ ແລະ ສປປ ລາວ ໃຫ້ຫຼາຍຂຶ້ນກວ່າເກົ່າ ໄປຄຽງຄູ່ກັບການສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ການພັດທະນາຂອງ ສປປ ລາວ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ແລະ ຍັງຢືນຢັນເຖິງແນວທາງນະໂຍບາຍຕ່າງປະເທດຂອງ ພັກ-ລັດຖະບານລາວ ໃນການເປີດກວ້າງການພົວພັນກັບບັນດາພັກການເມືອງ ແລະ ບັນດາປະເທດທົ່ວໂລກ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ.

ທ່ານທູດ ມາກ ກາລາເກີ ໄດ້ສະແດງຄວາມຂອບໃຈຕໍ່ ທ່ານຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ໃຫ້ກຽດຕ້ອນຮັບໃນຄັ້ງນີ້, ພ້ອມທັງຊົມເຊີຍຕໍ່ຜົນສໍາເລັດໃນການສ້າງສາພັດທະນາ ຂອງ ສປປ ລາວ. ພ້ອມນັ້ນ, ທ່ານທູດ ໄດ້ຢືນຢັນວ່າ ຈະພະຍາຍາມຢ່າງສຸດຄວາມສາມາດໃນການເປັນຂົວຕໍ່ຊຸກຍູ້ເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ໃນຂົງເຂດຕ່າງໆທີ່ສອງຝ່າຍມີທ່າແຮງ ໃຫ້ນັບມື້ຫຼາຍຂຶ້ນ.

### 2) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມກອງປະຊຸມສາກົນ ທີ່ ສ. ຣັດເຊຍ




ໃນວັນທີ 15 ພະຈິກ 2025, ຄະນະຜູ້ແທນ ພັກປະຊາຊົນປະຕິວັດລາວ ນໍາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ພ້ອມດ້ວຍຄະນະ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມຄະນະປະຈໍາຂອງເວທີປຶກສາຫາລືຂອງບັນດາຝ່າຍສະໜັບສະໜູນ ການຕໍ່ສູ້ຕ້ານການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນສະໄໝໃໝ່

“ເພື່ອເສລີພາບຂອງບັນດາຊາດ” ຄຽງຄູ່ກັບ ກອງປະຊຸມສຳມະນາສາກົນ ບຣິກ-ເອີຣົບ "BRICS-Europe" ຊຶ່ງຈັດຂຶ້ນທີ່ ເມືອງໂຊຈິ, ສ. ຣັດເຊຍ ໃນລະຫວ່າງວັນທີ 14-15 ພະຈິກ 2025 ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ, ມີຄະນະຜູ້ແທນຈາກພັກການເມືອງທີ່ເປັນຄະນະປະຈຳຂອງຂອບການຮ່ວມມືດັ່ງກ່າວ ແລະ ບັນດາພັກການເມືອງຄູ່ຮ່ວມສັງເກດການ ທີ່ມາຈາກທະວີບອາຊີ, ເອີຣົບ, ອາຟຣິກາ ແລະ ອາເມຣິກາລາຕິນ ຫຼາຍກວ່າ 50 ປະເທດ ເຂົ້າຮ່ວມ.

ກອງປະຊຸມຄະນະປະຈຳຄັ້ງນີ້ ເປັນກອງປະຊຸມປະຈຳປີ 2025 ຊຶ່ງໄດ້ປຶກສາຫາລື ໂດຍມີຫົວຂໍ້ປິ່ນອ້ອມ ກ່ຽວກັບການຕອບໂຕ້ການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນສະຕະວັດທີ 21 ເຊັ່ນ: ບັນຫາການສວຍໃຊ້ການເລືອກຕັ້ງຂອງລັດທິລ່າເມືອງຂຶ້ນແບບໃໝ່ ແລະ ພາລະກິດປັດຈຸບັນຂອງຂະບວນການເສລີພາບເພື່ອບັນດາຊາດ ພາຍໃຕ້ສະພາບການຫັນເປັນໂລກຫຼາຍຂົ້ວ.

ໃນພິທີເປີດ ທ່ານ ດີມິຕຣີ ເມັດເວເດັບ, ປະທານພັກຣັດເຊຍເອກະພາບ ໄດ້ກ່າວເນັ້ນໜັກ ກ່ຽວກັບ ສະພາບການສາກົນໃນປະຈຸບັນ, ບັນດາການເຄື່ອນໄຫວຜ່ານມາ ຂອງຂະບວນການ ແລະ ຊີ້ໃຫ້ເຫັນເຖິງ ຄວາມຈຳເປັນໃນການເສີມຂະຫຍາຍການພົວພັນຮ່ວມມື ຂອງບັນດາພັກການເມືອງ ເພື່ອຕ້ານການເຄື່ອນໄຫວຂອງລັດທິລ່າເມືອງຂຶ້ນແບບໃໝ່; ຈາກນັ້ນ ບັນດາຜູ້ແທນກອງປະຊຸມ ໄດ້ປະກອບຄຳເຫັນ ຕໍ່ບັນດາຫົວຂໍ້ຂອງກອງປະຊຸມ ໂດຍໄດ້ແລກປ່ຽນບົດຮຽນຂອງຕົນ ຕໍ່ກັບການເຄື່ອນໄຫວ ແລະ ຜົນກະທົບຂອງລັດທິລ່າເມືອງຂຶ້ນແບບໃໝ່ ຢູ່ບັນດາພາກພື້ນຕ່າງໆຂອງໂລກ ລວມທັງຜົນກະທົບຕໍ່ ບັນດາຈຸດຮ້ອນຕ່າງໆຂອງໂລກ ໃນປັດຈຸບັນ. ໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ປະກອບຄຳເຫັນ ໂດຍໄດ້ຊີ້ໃຫ້ເຫັນເຖິງ ບົດບາດຂອງພັກປະຊາຊົນປະຕິວັດລາວ ໃນການນຳພາປະຊາຊົນລາວ ຕໍ່ສູ້ຍາດເອົາໄຊຊະນະ ຈາກພວກລ່າເມືອງຂຶ້ນ ໃນເມື່ອກ່ອນ, ໄດ້ຕີລາຄາສູງຕໍ່ຜົນງານຂອງຂະບວນການໃນໄລຍະຜ່ານມາ ແລະໄດ້ຢໍ້າຄືນ ທັດສະນະອັນສະເໝີຕົ້ນສະເໝີປາຍ ຂອງພັກປະຊາຊົນປະຕິວັດລາວ ໃນການເປີດກວ້າງການພົວພັນຮ່ວມມືກັບບັນດາພັກການເມືອງເພື່ອນມິດ, ປະຕິບັດພັນທະສາກົນຂອງຕົນ ກໍຄື ການສະໜັບສະໜູນຂະບວນການ “ເພື່ອເສລີພາບຂອງບັນດາຊາດ” ໃຫ້ສືບຕໍ່ຂະຫຍາຍຕົວຢ່າງກວ້າງຂວາງ. ໃນຕອນທ້າຍຂອງກອງປະຊຸມ ຍັງໄດ້ຕົກລົງເຫັນດີເປັນເອກະພາບ ກ່ຽວກັບ ທິດທາງການເຄື່ອນໄຫວໃນຕໍ່ໜ້າ ແລະ ແຜນການສຳລັບປີ 2026 ຂອງຄະນະປະຈຳດັ່ງກ່າວ.

### 3) ສະມາຄົມມິດຕະພາບ ມຽນມາ - ລາວ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ




ໂດຍຕອບສະໜອງຕາມການເຊີນຂອງ ທ່ານ ປະທານ ສະມາຄົມມິດຕະພາບ ລາວ-ມຽນມາ, ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ນຳໂດຍ ທ່ານ ພົນຈັດຕະວາ ວິນ ມອງ (Win Maung), ປະທານສະມາຄົມມິດຕະພາບ ມຽນມາ-ລາວ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກກັບສະມາຄົມມິດຕະພາບລາວ-ມຽນມາ ຢູ່ ສປປ ລາວ ແຕ່ວັນທີ 16-20 ພະຈິກ 2025.

ໃນວັນທີ 17 ພະຈິກ 2025, ສອງສະມາຄົມມິດຕະພາບ ໄດ້ຈັດກອງປະຊຸມພົບປະຄັ້ງທຳອິດ ນັບຕັ້ງແຕ່ສອງສະມາຄົມສ້າງຕັ້ງມາ, ໂດຍການເປັນປະທານຮ່ວມ ຂອງ ທ່ານ ຈັນທະວົງ ແສນອາມາດມີນຕີ, ຮອງປະທານກຳມາທິການການຕ່າງປະເທດ, ສະພາແຫ່ງຊາດ, ປະທານສະມາຄົມ ມິດຕະພາບ ລາວ - ມຽນມາ ແລະ ທ່ານ ພົນຈັດຕະວາ ວິນມອງ (Win Maung), ປະທານສະມາຄົມ ມິດຕະພາບ ມຽນມາ - ລາວ ແລະ ເປັນກຽດເຂົ້າຮ່ວມ ຂອງ ທ່ານ ອອງໂກ (Aung Ko), ເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສສ. ມຽນມາ ປະຈຳ ສປປ ລາວ. ພ້ອມນີ້

ຍັງມີບັນດາທ່ານຄະນະສະມາຄົມມິດຕະພາບ ລາວ - ມຽນມາ ແລະ ມຽນມາ - ລາວ, ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ທົບທວນການຈັດຕັ້ງປະຕິບັດການພົວພັນຮ່ວມມື (ການທູດປະຊາຊົນ) ໃນໄລຍະຜ່ານມາ ແລະ ປຶກສາຫາລືວາງທິດທາງແຜນການຮ່ວມມືໃນຕໍ່ໜ້າ ລະຫວ່າງ ສະມາຄົມມິດຕະພາບ ລາວ - ມຽນມາ ແລະ ມຽນມາ - ລາວ; ເຊິ່ງສອງສະມາຄົມໄດ້ເປັນໃຈກາງປະສານງານ, ຊຸກຍູ້, ໂຄສະນາເຜີຍແຜ່ສາຍພົວພັນ ແລະ ການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ໃຫ້ປະຊາຊົນສອງຊາດໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ, ເພື່ອສ້າງຄວາມຮັກແພງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ສ້າງກິດຈະກຳຮ່ວມກັນ ເພື່ອປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ສສ. ມຽນມາ ໃຫ້ນັບມື້ໄດ້ຮັບການພັດທະນາ ຂຶ້ນເລື້ອຍໆ.

ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ - ລາວ ຍັງໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ເຊິ່ງທ່ານ ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕີລາຄາສູງຕໍ່ການຢ້ຽມຢາມຂອງ ຄະນະຜູ້ແທນ ສະມາຄົມ ມິດຕະພາບ ມຽນມາ - ລາວ ແລະ ເປັນນິມິດໝາຍສຳຄັນ ຕໍ່ການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ ລາວ ແລະ ມຽນມາ ເປັນການເປີດກວ້າງການພົວພັນຮ່ວມມືຊຸກຍູ້ການພົວພັນການທູດປະຊາຊົນ ເພື່ອຮັດແໜ້ນສາຍພົວພັນມິດຕະພາບ ແລະ ສ້າງຄວາມເຂົ້າອົກເຂົ້າໃຈ ລະຫວ່າງ ປະຊາຊົນ ສອງຊາດລາວ ແລະ ມຽນມາ ໂດຍສະເພາະ ສອງສະມາຄົມ ມິດຕະພາບ ລາວ - ມຽນມາ ແລະ ມຽນມາ - ລາວ ໃຫ້ມີບາດກ້າວໃໝ່. ນອກນັ້ນ, ຍັງໄດ້ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃຫ້ຄະນະຜູ້ແທນຊາບ. ທ່ານ ພົນຈັດຕະວາ ວິນ ມອງ (Win Maung) ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ - ລາວ, ທັງໄດ້ລາຍງານການເຄື່ອນໄຫວອັນພົ້ນເດັ່ນ ຂອງ ສະມາຄົມມິດຕະພາບ ມຽນມາ - ລາວ ແລະ ຍິນດີຈະສືບຕໍ່ຮ່ວມກັບສະມາຄົມມິດຕະພາບ ລາວ - ມຽນມາ ເພື່ອເສີມຂະຍາຍສາຍພົວພັນມິດຕະພາບໃຫ້ນັບມື້ນັບດີຂຶ້ນ.